ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ກຳມະບານ ທະນາຄານແຫ່ງ ສປປ ລາວ ບໍລິຈາກເລືອດ





ຄະນະສະຫະພັນກຳມະບານທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງການບໍລິຈາກເລືອດຂອງຄະນະນຳ ແລະ ສະມາຊິກກຳມະບານທົ່ວຂະແໜງການທະນາຄານໃຫ້ແກ່ສູນເລືອດແຫ່ງຊາດ ອົງການກາແດງລາວໃນວັນທີ 11 ມິຖຸນາ 2020 ທີ່ສຳນັກງານໃຫຍ່ທະນາຄານສົ່ງເສີມກະສິກຳ ນະຄອນຫຼວງວຽງຈັນ. ໂດຍການນຳພາຂອງສະຫາຍ ຄຳສິງ ແສງແກ້ວມະຫາວົງ ຮອງປະທານສະຫະພັນກຳມະບານ ທຫລ ແລະ ມີທ່ານ ດຣ. ຈັນທະລາ ສຸກສາຄອນ ຫົວໜ້າສູນເລືອດແຫ່ງຊາດ ພ້ອມດ້ວຍຄະນະແພດ ແລະ ກຳມະບານ ທຫລ ເຂົ້າຮ່ວມ ທັງນີ້ກໍ່ເພື່ອເປັນການສ້າງຜົນງານຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ IV ຂອງອົງຄະນະພັກ ທຫລ ແລະ ກອງປະຊຸມໃຫຍ່ ຄັ້ງທີ VIII ຂອງສະຫະພັນກຳມະບານ ທຫລ ທີ່ຈະເປີດຂຶ້ນໃນຕໍ່ໜ້ານີ້.

ການບໍລິຈາກເລືອດຄັ້ງນີ້ ກໍ່ຢູ່ໃນທ່າມກາງທົ່ວທັງໂລກ ພວມຢູ່ໃນໄລຍະມີການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ຢູ່ໃນໄລຍະທີ່ ສປປ ລາວ ປອດເຊື້ອພະຍາດດັ່ງກ່າວ ທັງເປັນວັນຜູ້ບໍລິຈາກເລືອດໂລກ (ວັນທີ 14 ມິຖຸນາ) “World Blood Donor Day” ໂດຍມີຄະນະນຳ ແລະ ສະມາຊິກກຳມະບານເຂົ້າກວດເລືອດຕົວຈິງ 150 ສະຫາຍ ໃນນີ້ພົ້ນເດັ່ນແມ່ນທະນາຄານການຄ້າຕ່າງປະເທດລາວມະຫາຊົນ (ຈຳນວນເຂົ້າຮ່ວມ 50 ສະຫາຍ) ແລະ ມີຜູ້ທີ່ສາມາດບໍລິຈາກເລືອດຕົວຈິງທັງໝົດ 111 ສະຫາຍ ຊຶ່ງເປັນການບໍລິຈາກທີ່ບໍລິສຸດ, ບໍ່ຫວັງຜົນຕອບແທນ ທັງເປັນການບໍລິຈາກເລືອດ ແລະ ຜະລິດຕະພັນເລືອດທີ່ປອດໄພ ເພື່ອເປັນການຊ່ວຍຊີວິດຂອງຄົນເຈັບໃຫ້ປອດໄພ ແລະ ເປັນການປູກຈິດສຳນຶກໃຫ້ສັງຄົມ ມີການປະກອບສ່ວນໃນການບໍລິຈາກເລືອດຫຼາຍຂຶ້ນ ເຮັດໃຫ້ສັງຄົມ ມີຄວາມສະຫງົບ ເປັນສັງຄົມທີ່ມີຈິດໃຈເອື້ອເຟື້ອເພື່ອແຜ່ ມີຄວາມສາມັກຄີ ແລະ ມີສຸຂະພາບທີ່ດີ.



ໃນໂອກາດດັ່ງກ່າວ; ສະຫາຍ ຄຳສິງ ແສງແກ້ວມະຫາວົງ ຮອງປະທານສະຫະພັນກຳມະບານ ທຫລ ໄດ້ຢືນຢັນວ່າ: ການບໍລິຈາກເລືອດຂອງສະມາຊິກກຳມະບານໃນເທື່ອນີ້ ເປັນການຊ່ວຍເຫຼືອເພື່ອນມະນຸດດ້ວຍກັນ ເນື່ອງຈາກປະຈຸບັນມີຄົນຈຳນວນບໍ່ໜ້ອຍທີ່ເຈັບປ່ວຍ ທີ່ພວມລໍຖ້າຄວາມຊ່ວຍເຫຼືອຈາກພວກເຮົາ, ຖ້າບໍ່ມີໃຜສົນໃຈຕໍ່ວຽກງານນີ້ ບຸກຄົນເຫຼົ່ານັ້ນຍັງລໍຄອຍຂໍຄວາມຊ່ວຍເຫຼືອ ກໍ່ຈະບໍ່ມີຊີວິດຢູ່ຕໍ່ໄປໄດ້ ເພາະການໃຫ້ເລືອດຄືການໃຫ້ຊີວິດ ແລະ ພວກເຮົາໄດ້ພ້ອມກັນຈັດຕັ້ງປະຕິບັດໃນການບໍລິຈາກເລືອດມາເປັນເວລາຫຼາຍປີ ກາຍເປັນປະເພນີຂອງຄະນະກຳມະບານຂອງພວກເຮົາ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ຢູ່ເມືອງລາວ ໃຊ້ເງິນກີບລາວ ຊາດລາວກ້າວໄປ